ຫົວໜ່ວຍວິຊາການລະດັບສອງຂຶ້ນກັບກະຊວງປະກອບມີ:

1. ວິທະຍາໄລການເງິນພາກເໜືອ;
2. ວິທະຍາໄລການເງິນພາກໃຕ້.

ກົງຈັກຄຸ້ມຄອງຕາມສາຍຕັ້ງປະຈຳຢູ່ທ້ອງຖິ່ນ:

1. ກອງຄຸ້ມຄອງພາສີ;
   - ຫ້ອງວິຊາການຈຳນວນໜຶ່ງຂຶ້ນກັບ;
   - ດ່ານພາສີຊາຍແດນ: ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ, ດ່ານພາສີປະເພນີ.
2. ສ່ວນສາອາກອນປະຈຳແຂວງ, ນະຄອນຫຼວງ
   - ສ່ວນສາອາກອນປະຈຳເມືອງ, ເທດສະບານ, ນະຄອນ.
3. ຄັງເງິນແຫ່ງຊາດປະຈຳແຂວງ, ນະຄອນຫຼວງ
   - ຄັງເງິນແຫ່ງຊາດປະຈຳເມືອງ, ເທດສະບານ, ນະຄອນ.

ກົງຈັກການຈັດຕັ້ງຂອງທ້ອງຖິ່ນ ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ຂອງກະຊວງການເງິນ ມີຄື:

1. ຂັ້ນແຂວງ ມີ ພະແນກການເງິນ;
2. ຂັ້ນເມືອງ ມີ ຫ້ອງການການເງິນ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນຂອງກະຊວງການເງິນ ປະກອບມີ:

ກ. ຂັ້ນກະຊວງ

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານ ໃນການຄຸ້ມຄອງມະຫາພາກຕາມຂະແໜງການຕົນ ຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ;

   ໃນເວລາຕິດຂັດ ລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີກະຊວງ ທ່ານໃດໜຶ່ງເປັນຜູ້ຮັກສາການແທນ.
2. ຮອງລັດຖະມົນຕີກະຊວງຈຳນວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

   ຮອງລັດຖະມົນຕີກະຊວງເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີກະຊວງຕິດຂັດ.
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນ ວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ຂ. ພະແນກການເງິນ ຂັ້ນແຂວງ ແລະ ຫ້ອງການການເງິນ ຂັ້ນເມືອງ

1. ຂັ້ນແຂວງ ມີຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ;
2. ຂັ້ນເມືອງ ມີຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ, ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ລັດຖະກອນວິຊາການ ຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.